## ການເຜີຍແຜ່ ບັນດາວິທີການ ການຄຸ້ມຄອງ PIP ທົ່ວປະເທດ

ພີແສັບ 2 ມີເປົ້າໝາຍ ຊ່ວຍເຫຼືອ ພະນັກງານລັດ ໃນການພັດທະນາ ຄວາມສາມາດຂອງເຂົາເຈົ້າ ໃນການຄຸ້ມຄອງ ບັນດາໂຄງການ ແຜນງານ ການລົງທຶນຂອງລັດ (PIP) ໂດຍການໃຫ້ການຝຶກອົບຮົມ ແລະ ການຝຶກອົບຮົມກັບທີ່ ໃນທົ່ວປະເທດ.

### ຄວາມເປັນມາ

ກະຊວງ ແຜນການ ແລະ ການລົງທຶນ ແລະ ພີແສັບ1 ໄດ້ພັດທະນາ ບັນດາວິທີການ ແລະ ເຄື່ອງມືຕ່າງໆ ທີ່ຊ່ວຍໃນການຄຸ້ມຄອງ PIP ຢ່າງເໝາະສົມ. ໃນຊ່ວງພີແສັບ1, ບັນດາວິທີການ ແລະ ເຄື່ອງມືຕ່າງໆ ທີ່ໄດ້ຮັບການພັດທະນາຂຶ້ນນັ້ນ ໄດ້ຖ່າຍໂອນໃຫ້ກັບ 3 ແຂວງທົດລອງເບື້ອງຕົ້ນ, ຄື ແຂວງ ອຸດົມໄຊ, ຄຳມ່ວນ ແລະ ສາລະວັນ. ບັນດາວິທີການ ເຫັນໄດ້ວ່າມີປະໂຫຍດ. ດັ່ງນັ້ນ ມັນຈະເສີມຂະຫຍາຍ ໄປທົ່ວ16 ແຂວງ ແລະ ນະຄອນຫຼວງວຽງຈັນ ແລະ ກະຊວງຂັ້ນສູນກາງທັງໝົດ ໂດຍຜ່ານກິດຈະກຳຕ່າງໆ ຂ້າງລຸ່ມນີ້:

### ກິດຈະກຳຕ່າງໆ

:

1. ດຳເນີນການຝຶກອົບຮົມ ການຄຸ້ມຄອງ PIP ທົ່ວປະເທດ ໃຫ້ກັບ 16 ແຂວງ ແລະ ນະຄອນຫຼວງວຽງຈັນ ແລະ ບັນດາກະຊວງ ແລະ ອົງການຈັດຕັ້ງທຽບເທົ່າ. ການຝຶກອົບຮົມ ມີເປົ້າໝາຍ ເພື່ອຊ່ວຍໃຫ້ພະນັກງານ ທີ່ມີໜ້າທີ່ຮັບຜິດຊອບ ໃນການຄຸ້ມຄອງ PIP ຍົກລະດັບຄວາມສາມາດຂອງເຂົ້າເຈົ້າ ໃນການຄຸ້ມຄອງ PIP.
2. ມີການຕິດຕາມ ຫຼື ໃຫ້ການຝຶກອົບຮົມກັບທີ່ ເພື່ອຊ່ວຍໃຫ້ພະນັກງານ ໝູນໃຊ້ ວິທີການ ທີ່ໄດ້ຮຽນມາເຂົ້າໃນວຽກງານປະຈຳວັນ.
3. ປະເມີນຜົນ ການຝຶກອົບຮົມ ການຄຸ້ມຄອງ PIP ທົ່ວປະເທດ ແລະ ການຝຶກອົບຮົມກັບທີ່ ວ່າມີປະໂຫຍດ ຕໍ່ກັບວຽກງານ ການຄຸ້ມຄອງ ປະຈຳວັນ ຫຼາຍຊ່ຳໃດ ແລະ ນຳສະເໜີຜົນດັ່ງກ່າວຕໍ່ອົງກອນທີ່ກ່ຽວຂ້ອງ.
4. ຈັດຕັ້ງ ການປະເມີນຜົນ ແບບ Meta ຫຼື ປະເມີນຜົນ ຄຸນນະພາບ ຂອງ ຜົນໄດ້ຮັບ ຂອງ ການປະເມີນ/ປະເມີນຜົນ ໂຄງການ PIP ແລະ ນຳສະເໜີຜົນດັ່ງກ່າວ ຕໍ່ບັນດາແຂວງ ແລະ ບັນດາກະຊວງ ທັງໝົດ.
5. ໝູນໃຊ້ ຜົນໄດ້ຮັບ ຂອງ ການປະເມີນຜົນ ການຝຶກອົບຮົມ ແລະ ການປະເມີນຜົນ ແບບ Meta ເພື່ອພັດທະນາຕໍ່ໄປ ກ່ຽວກັບ ບັນດາວິທີການ ແລະ ສະທ້ອນ ຜົນໄດ້ຮັບດັ່ງກ່າວ ໃນເນື້ອໃນ ການຝຶກອົບຮົມປີໜ້າ.
6. ຊ່ວຍ ກະຊວງ ແຜນການ ແລະ ການລົງທຶນ ທີ່ດຳເນີນກິດຈະກຳຕ່າງໆ ຂ້າງເທິງນັ້ນ ໃຫ້ມີຄວາມຍືນຍົງ ພາຍຫຼັງສຳເລັດ ພີແສັບ2.

## ຮູບຖ່າຍ ການດຳເນີນ ກິດຈະກຳຕ່າງໆ



ປື້ມຄູ່ມື ການຄຸ້ມຄອງ PIP ເຕັມໄປດ້ວຍ ການຈົດກ່າຍ ຂອງຜູ້ເຂົ້າຝຶກອົບຮົມ (ການຝຶກອົບຮົມ ທົ່ວປະເທດ ໃນແຂວງ ເຊກອງ)



ເຊກອງເປັນແຂວງທ້າຍສຸດທີ່ຜ່ານການຝຶກອົບຮົມ. ຜູ້ເຂົ້າຮ່ວມມີຄວາມຫ້າຫັນ ໃນການຮ່ຳຮຽນ ວິທີການ ຄຸ້ມຄອງ PIP ແບບໃໝ່ (ການຝຶກອົບຮົມ ທົ່ວປະເທດ ໃນແຂວງ ເຊກອງ)



ພາຍໃຕ້ງົບປະມານທີ່ຈຳກັດ, ການປະເມີນແບບສົມທຽບ ແມ່ນມີຄວາມສຳຄັນ ເພື່ອຈັດລຽງບູລິມະສິດ ແລະ ຄັດເລືອກ ໂຄງການ PIP ເພື່ອຈັດຕັ້ງປະຕິບັດ. (ການຝຶກອົບຮົມ ທົ່ວປະເທດ ໃນແຂວງ ອັດຕະປື)



ຜູ້ເຂົ້າຝຶກອົບຮົມ ຮຽນຮູ້ກ່ຽວກັບ “logical framework” ສຳລັບ ການວາງແຜນການ. (ການຝຶກອົບຮົມ ທົ່ວປະເທດ ໃນແຂວງ ອັດຕະປື)



ຜູ້ເຂົ້າຝຶກອົບຮົມ ຂຽນບົດສະເໜີໂຄງການ ໂດຍການນຳໃຊ້ ແບບຮ່າງ ທີ່ໄດ້ຮັບການພັດທະນາຂຶ້ນ ໂດຍ ພີແຄັບ (ການຝຶກອົບຮົມ ທົ່ວປະເທດ ໃນແຂວງ ໄຊຍະບຸລີ)



ຜູ້ເຂົ້າຝຶກອົບຮົມ ປະເມີນ ບົດສະເໜີໂຄງການ ໂດຍການນຳໃຊ້ ໃບປະເມີນ ໂຄງການ ແບບກະທັດຮັດ ທີ່ໄດ້ຮັບການພັດທະນາຂຶ້ນ ໂດຍ ພີແຄັບ (ການຝຶກອົບຮົມ ທົ່ວປະເທດ ໃນແຂວງ ໄຊຍະບຸລີ)